# ການແນະນຳໄປຕຣອດ
# ຖຳນອນເບິ່ງການໄດ້ຍິນສູງ



California Newborn Hearing Screening Program

State of California, Department of Health Services,
Children's Medical Services

## ເປັນຫຍັງລູກຂອງຂ້ອຍ ຈຶ່ງຕ້ອງການຕຣວດຖໍານອນເບິ່ງການໄດ້ຍິນສຽງ?

ເດັກທາຣົກຂອງທ່ານຍັງບໍ່ໄດ້ຜ່ານການຕຣວດວິຈັຍເບິ່ງການໄດ້ຍິນສຽງເທື່ອ. ມັນມີຫລາຍສິ່ງຫລາຍຢ່າງທີ່ສາມາດເຂົ້າໄປແຊກແຊງ ລົບກວນການຕຣວດວິຈັຍເບິ່ງການໄດ້ຍິນສຽງນັ້ນ, ຍົກຕົວຢ່າງ, ມີສຽງດັງຢູ່ໃນຫ້ອງຕຣວດ ຫລືວ່າທາຣົກເປັນຜູ້ມັກຫນິງຕິງ. ມັນເປັນສິ່ງສໍາຄັນທີ່ຈະຕ້ອງເຮັດການທົດສອບເບິ່ງການໄດ້ຍິນສຽງແບບໃຫ້ເສັດຮຽບຮ້ອຍນັ້ນຕື່ມອີກ ໃຫ້ໄວເທົ່າທີ່ຈະໄວໄດ້ ເພື່ອຢາກຮູ້ຈັກເຖິງການໄດ້ຍິນສຽງຂອງທາຣົກຂອງທ່ານ.

## ມັນມີເດັກທາຣົກທີ່ເສັຽຫູ ຫລືບໍ່ໄດ້ຍິນສຽງນັ້ນຫລາຍເທົ່າໃດ?

ທາຣົກສ່ວນຫລາຍເກີດມາດ້ວຍການໄດ້ຍິນສຽງເປັນປົກຕິດີ. ແຕ່ເຖິງຢ່າງໃດກໍຕາມ, ໄດ້ພົບເຫັນວ່າ ມັນມີການເສັຽຫູຢ່າງຫນັກນັ້ນ ປະມານ ໒-໔ ໃນຈໍານວນ ໑໐໐໐ ຂອງເດັກທາຣົກເກີດໃຫມ່. ປະ ມານ ໕໐% ຂອງທາຣົກຜູ້ທີ່ເສັຽຫູ ຫລືບໍ່ໄດ້ຍິນນັ້ນບໍ່ເຮັດໃຫ້ເຫັນພິຣຸດ ຫລືພາກສ່ວນຕ່າງໆຂອງການສ່ຽງ ຄືບໍ່ມີການເຈັບປ່ວຍຫນັກ ຫລືບໍ່ມີປະວັດກ່ຽວກັບການເປັນຫູຫນວກຂອງຄົນໃນຄອບຄົວ. ມັນມີຫລາຍໆເງື່ອນໄຂ ທີ່ອາດຈະເກີດຂຶ້ນກ່ອນການເກີດຂອງທາຣົກ, ດັ່ງນັ້ນ ເມື່ອຢູ່ໃນຣະຫວ່າງວັຍທາຣົກ ຫລືວັຍເດັກນັ້ນ ມັນອາດຈະເກີດມີການເສັຽຫູຂອງເດັກກໍໄດ້. ການເສັຽຫູ ຕໍ່ໄປຢູ່ໃນວັຍເດັກນັ້ນ ອາດຈະເປັນຜົນເຮັດໃຫ້ເກີດຫູຫນອງ, ເກີດແຜ່ນຫຸ້ມສະມອງ, ເປັນບາດແຜໃນຫົວ, ຫລື ເກີຊດສະພາບກ່ຽວກັບສຸຂພາບອື່ນໆ. ຢາປົວພະຍາດຕ່າງໆ ກໍສາມາດເຮັດໃຫ້ເກີດການເສັຽຫູໄດ້ເຊັ່ນກັນ. ບາງຄັ້ງ ກໍບໍ່ຮູ້ວ່າແມ່ນຫຍັງທີ່ເປັນສາເຫດເຮັດໃຫ້ເກີດການເສັຽຫູຂອງທາຣົກ. ໃຫ້ລົມນໍາທ່ານຫມໍຂອງເດັກຂອງທ່ານ ຖ້າຫາກວ່າທ່ານມີຂໍ້ຂ້ອງໃຈ ຫລືຄວາມເປັນຫວ່ງ ຕ່າງໆ.

## ເປັນຫຍັງຈຶ່ງທົດສອບເບິ່ງທາຣົກ?

ການຄົ້ນຫາເບິ່ງການເສັຽຫູນັ້ນ ຄວນຈະເຮັດແຕ່ຕອນຕົ້ນຂອງຊີວິດເທົ່າທີ່ຈະໄວໄດ້. ຊີວິດຂອງເດັກໃນເດືອນທີ່ເກີດມາທໍາອິດນັ້ນ ແມ່ນສໍາຄັນຫລາຍທີ່ສຸດ ສໍາລັບການກໍ່ສ້າງໃຫ້ມີຄວາມຊໍານານໃນການປະສານພົວພັນ. ເດັກຜູ້ທີ່ເສັຽຫູ ຫລືຫູຫນວກນັ້ນ ອາດຈະມີຄວາມລໍາບາກໃນການກໍ່ສ້າງຄວາມຊໍານານດ້ານພາສາ ຫລືອາດຈະຮຽນບໍ່ເກັ້ງຢູ່ໃນໂຮງຮຽນ. ການພົບເຫັນການເສັຽຫູຂອງເດັກໄວໄດ້ເທົ່າໃດ ກໍຍິ່ງເຮັດໃຫ້ການຈັດຫາການຊ່ວຍເຫລືອໄດ້ໄວຂຶ້ນເທົ່ານັ້ນ.



## ທ່ານຈະເຮັດຢ່າງໃດ ເພື່ອຕຽມການ ສໍາລັບການຕຣວດຖໍານອນເບິ່ງການໄດ້ຍິນສຽງຂອງເດັກ?

ເດັກທາຣົກຂອງທ່ານຕ້ອງນອນຫລັບຢ່າງສະບາຍ ໃນຣະຫວ່າງການຕຣວດຖໍານອນການໄດ້ຍິນສຽງ. ຂໍ້ແນະນໍາຕ່າງໆເຫລົ່ານີ້ ອາດຈະຊ່ວຍທ່ານຈັດຕຽມທາຣົກຂອງທ່ານໃຫ້ນອນພັກຜ່ອນຢ່າງສະບາຍະ

໑. ພະຍາຍາມບໍ່ປ່ອຍໃຫ້ເດັກຂອງທ່ານນອນກ່ອນເວລານັດຫມາຍ.
໒. ການປ້ອນອາຫານໃຫ້ເດັກຂອງທ່ານ ໃນຣະຍະເວລາຫນ້ອຍນຶ່ງ. ກ່ອນທີ່ຈະທໍາການທົດສອບນັ້ນ ອາດຈະຊ່ວຍເຮັດໃຫ້ເດັກນອນ.
໓. ຖືເອົາຜ້າຫົ່ມ, ຜ້າໄດເປີຫລາຍໆຜືນ, ເຄື່ອງນຸ່ງສໍາລັບໃອ້ປ່ຽນ, ແລະນົມຫລາຍໆ, ຖ້າວ່າໄດ້ໃຊ້.
໔. ທ່ານຄວນພະຍາຍາມເຮັດນັດຫມາຍໃຫ້ເດັກຂອງທ່ານໃຫ້ຖືກກັບເວລາທີ່ເດັກຂອງທ່ານມັກນອນ.



## ແມ່ນຫຍັງຈະເກີດຂຶ້ນ ຫລັງຈາກການຕຣວດຖໍານອນ?

ທ່ານຈະຖືກແຈ້ງໃຫ້ຊາບກ່ຽວກັບຜົນຂອງການຕຣວດຖໍານອນ ແລະກໍຈະໄດ້ຮັບໃບຣາຍງາຍໃຫ້ຊາບ. ໃບຣາຍງານອັນນຶ່ງ ກໍຈະຖືກສົ່ງໄປໃຫ້ຫມໍຮັກສາດູແລສຸຂພາບຂອງເດັກຂອງທ່ານເຊັ່ນກັນ. ຖ້າຫາກວ່າມີການພົບເຫັນການເສັຽຫູແລ້ວ, ທ່ານຈະໄດ້ຖືກສົ່ງໄປຫາໂຄງການພິເສດ ແລະສູນບໍຣິການຊຸມຊົນ. ສູນປະສານງານເພື່ອທົດສອບການໄດ້ຍິນສຽງຂອງໂຄງການຕຣວດວິຈັຍການໄດ້ຍິນສຽງຂອງທາຣົກເກີດໃຫມ່ ຂອງຣັດຄາລິຟໍເນັຍ ອາດຈະຕິດຕໍ່ຫາທ່ານ ເພື່ອຊ່ວຍທ່ານ ແລະລູກຂອງທ່ານເອົາການບໍຣິການທີ່ທ່ານຕ້ອງການ.



## ແມ່ນໃຜເປັນຜູ້ຈ່າຍຄ່າການຕຣວດຖໍານອນເບິ່ງການໄດ້ຍິນສຽງ?

ຄ່າການໃຊ້ຈ່າຍກ່ຽວກັບການຕຣວດຖໍານອນເບິ່ງການໄດ້ຍິນສຽງ ແມ່ນຖືກປະກັນ ຫລືຄຸ້ມຄອງໂດຍທາງບໍຣິສັດປະກັນພັຍສຸຂພາບຫລາຍໆບໍຣິສັດ. Medi-Cal ແລະໂຄງການການບໍຣິການແກ່ເດັກຂອງຣັດຄາລິຟໍເນັຍ (CCS) ກໍຈະຈ່າຍຄ່າການຕຣວດຖໍານອນໃຫ້ແກ່ເດັກທາຣົກຜູ້ທີ່ມີສິດທິກ່ຽວກັບການໄດ້ຮັບ. ຖ້າຫາກວ່າທ່ານມີຂໍ້ຂ້ອງໃຈອັນໃດກ່ຽວກັບການຈ່າຍສໍາລັບການຕຣວດຖໍານອນດັ່ງກ່າວນີ້ແລ້ວ, ໃຫ້ລົມກັບທ່ານຫມໍຫລືຜູ້ຮັກສາດູແລສຸຂພາບຂອງເດັກຂອງທ່ານ ຫລືໃຫ້ໂທ 1-877-388-5301.

## ການເຝົ້າເບິ່ງຄວາມເຕີບໃຫຍ່ຂອງທາຣົກຂອງທ່ານ

ຖ້າຫາກວ່າການຕຣວດຖໍານອນ ສແດງໃຫ້ເຫັນວ່າ ເດັກຂອງທ່ານບໍ່ມີການເສັຽຫູແລ້ວ, ທ່ານກໍຍັງຄວນຈະເອົາເດັກຂອງທ່ານໄປກວດເບິ່ງການໄດ້ຍິນສຽງຂອງເດັກຂອງທ່ານອີກຢູ່ ຕາມການເຕີບໂຕຂອງທາຣົກຂອງທ່ານ. ການທົດສອບເບິ່ງການໄດ້ຍິນສຽງຂອງທາຣົກເກີດໃຫມ່ນັ້ນ ເປັນພຽງແຕ່ບາດກ້າວທໍາອິດ ໃນການເບິ່ງຄວາມກ້າວຫນ້າກ່ຽວກັບການໄດ້ຍິນສຽງ, ການປາກເວົ້າ, ແລະພາສາຂອງເດັກຂອງທ່ານ. ທາຣົກບາງຄົນກໍເກີດການເສັຽຫູຕາມຫລັງຕໍ່ມາ, ເພາະສະນັ້ນ ມັນຈຶ່ງເປັນສິ່ງຈໍາເປັນຢູ່ສເມີ ທີ່ຈະຕ້ອງຕັ້ງອົກຕັ້ງໃຈເບິ່ງການເຕີບໂຕໃນດ້ານພາສາ ແລະການປາກເວົ້າຂອງທາຣົກຂອງທ່ານ.

## ການຕຣວດຄຳນວນເບິ່ງການໄດ້ຍິນສຽງແມ່ນຫຍັງ?

ການຕຣວດຄຳນວນເບິ່ງການໄດ້ຍິນສຽງ ກໍແມ່ນອີກບາດກ້າວນຶ່ງ ໃນການຕຣວດເບິ່ງການໄດ້ຍິນສຽງຂອງລູກຂອງທ່ານ. ການຄຳນວນດັ່ງກ່າວນີ້ ຈະມີການທົດສອບຫລາຍໆເທື່ອ ເພື່ອໃຫ້ໄດ້ຮູບພາບອັນຄົບຖ້ວນກ່ຽວກັບການໄດ້ຍິນສຽງຂອງລູກຂອງທ່ານ. ການຄຳນວນດັ່ງກ່າວນີ້ ຈະຖືກເຮັດໃຫ້ເສັດຮຽບຮ້ອຍ ໂດຍໝໍຕຣວດການໄດ້ຍິນສຽງ, ໝໍດູແລຮັກສາສຸຂພາບ ຜູ້ທີ່ມີຄວາມຊຳນານສະເພາະກ່ຽວກັບການຕຣວດເບິ່ງການໄດ້ຍິນ ສຽງ.

## ການຕຣວດຄຳນວນເບິ່ງການໄດ້ຍິນສຽງນີ້ເຮັດໃຫ້ເສັດຮຽບຮ້ອຍໄດ້ຢ່າງໃດ?

ໃນຂນະທີ່ເດັກທາຣົກຂອງທ່ານພັກຜ່ອນ ຫລືນອນຫລັບຢູ່ນັ້ນ, ທ່ານໝໍກໍຈະເອົາເຄື່ອງມືແບບພິເສດ ສຳລັບໃຊ້ເປີດສຽງເບົາໆໃສ່ເຄື່ອງຟັງແບບສຸບໃສ່ຫູ (earphone) ແບບພິເສດ ຊຶ່ງເຮັດມາໃຊ້ສຳລັບທົດສອບການໄດ້ຍິນສຽງຂອງເດັກທາຣົກໂດຍສະເພາະ. ການຕຣວດທັງໝົດນັ້ນ ບໍ່ມີການເຈັບປວດແຕ່ຢ່າງໃດ. ການຂານຕອບຂອງເດັກທາຣົກຂອງທ່ານຕໍ່ສຽງຕ່າງໆນັ້ນ ແມ່ນໄດ້ຖືກບັນທຶກດ້ວຍຣະບົບອີເລັກໂທຣນິກ ໂດຍຜ່ານທາງເຄື່ອງຟັງສຽງແບບສຸບໃສ່ຫູ ຫລືຜ່ານທາງສາຍໄຟນ້ອຍໆທີ່ຈັບຕິດໃສ່ກັບແຜ່ນໜຽວໆຢູ່ເທິງຫົວ. ຍ້ອນວ່າມີການເຮັດການທົດສອບໃຫ້ຫລາຍຄືນ, ດັ່ງນັ້ນ ການຕຣວດຄຳນວນເບິ່ງການໄດ້ຍິນສຽງນັ້ນ ຈຶ່ງໃຊ້ເວລາຫລາຍກວ່າການຕຣວດວິຈັຍເບິ່ງການຟັງສຽງຂອງເດັກທີ່ເກີດໃຫມ່. ມັນເປັນໄປໄດ້ ທີ່ທ່ານອາດຈະໄດ້ລໍຖ້າຢູ່ຫ້ອງການນັ້ນເປັນຊົ່ວໂມງ ຫລືດົນກວ່ານັ້ນ ແລະກໍອາດຈະໄດ້ກັບຄືນມາສຳລັບເທື່ອທີສອງອີກ.



## ການນັດໝາຍໄປຕຣວດຄຳນວນເບິ່ງພະຍາດຂອງລູກຂອງທ່ານ:

ຊື່ເດັກຂອງທ່ານ:

______________________________

ວັນ & ເວລານັດຫມາຍ:

______________________________

ສະຖານທີ່ນັດຫມາຍ:

______________________________

ເລກໂທຣະສັບຕິດຕໍ່ບ່ອນນັດຫມາຍ:

______________________________

(ກະຣຸນາໂທໄປຫາ ຖ້າຫາກວ່າທ່ານຕ້ອງການເຮັດນັດຫມາຍຂອງທ່ານໃຫມ່ອີກ)

**ໂຄງການຕຣວດວິຈັຍການໄດ້ຍິນສຽງ**
**ຂອງເດັກເກີດໃໝ່ຂອງຣັດຄາລີຟໍເນັຍ**

ຈຸດຄາດຫມາຍຂອງໂຄງການຕຣວດວິຈັຍການໄດ້ຍິນຂອງເດັກເກີດໃຫມ່ຂອງຣັດຄາລີຟໍເນັຍ ແມ່ນເພື່ອພິສູດເບິ່ງບັນດາທາຣົກທີ່ຫູບໍ່ໄດ້ຍິນ ແລະເພື່ອຕໍ່ພວກເຂົາເຈົ້າໄປຫາການບໍຣິການຕ່າງໆ ພາຍໃນອາຍຸຫົກເດືອນ. ໂຄງການດັ່ງກ່າວນີ້ ມີສູນປະສານງານເພື່ອຕຣວດວິຈັຍການໄດ້ຍິນສຽງຢູ່ຫລາຍແຫ່ງ ທີ່ເຮັດວຽກຮ່ວມກັບພວກໝໍຮັກສາດູແລສຸຂພາບຂອງຄອບຄົວ ແລະຮ່ວມກັບໂຮງພະຍາບານຕ່າງໆ ເພື່ອໃຫ້ແນ່ນອນວ່າ ພວກເດັກນ້ອຍໄດ້ຮັບການບໍຣິການຕ່າງໆທີ່ຕ້ອງການ.

ໂຄງການຕຣວດວິຈັຍການໄດ້ຍິນສຽງຂອງເດັກເກີດໃຫມ່ ເກັບກຳເອົາຣາຍລະອຽດຕ່າງໆກ່ຽວກັບການຕຣວດວິຈັຍການຟັງສຽງຂອງເດັກຂອງທ່ານຕາມກົດຫມາຍກ່ຽວກັບການຮັກສາສຸຂພາບ ແລະຄວາມປອດພັຍມາຕຣາ ໑໒໔໑໑໗. ສູນປະສານງານເພື່ອຕຣວດວິຈັຍການໄດ້ຍິນສຽງ ອາດຈະໃຊ້ຣາຍຣະອຽດດັ່ງກ່າວນີ້ ເພື່ອຊ່ວຍທ່ານ ແລະເດັກຂອງທ່ານ ໃຫ້ໄດ້ຮັບການບໍຣິການຕ່າງໆ ທີ່ທ່ານອາດຈະຕ້ອງການ. ມັນເປັນໄປໄດ້ ທີ່ທາງສູນປະສານງານ ເພື່ອຕຣວດວິຈັຍການໄດ້ຍິນສຽງອາດຈະຕິດຕໍ່ຫາທ່ານກ່ຽວກັບການບໍຣິການອັນຕໍ່ໄປຕ່າງໆ.

**ຕ້ອງການຣາຍລະອຽດເພີ້ມເຕີມ**
**ກ່ຽວກັບໂຄງການຕຣວດວິຈັຍການໄດ້ຍິນສຽງ,**
**ໃຫ້ໂທແບບບໍ່ໄດ້ເສັຍຄ່າໄປຍັງ**
**1-877-388-5301**

Children's Medical Services
714 P Street
Sacramento, CA 95814

Gray Davis
ຜູ້ວ່າຣາຊການຣັດ
State of California

Grantland Johnson
ເລຂາທິການ
Health and Human Services Agency

Diana M. Bonta', R.N., Dr. P.H.
ຜູ້ອຳນວຍການ
Department of Health Services

CMS Contract 98-16110

Publication Number 859

Rev. 3/2000 Lao